# ບົດຖະແຫຼງຂ່າວ
## ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດ ຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19
## ປະຈຳວັນທີ 07 ພຶດສະພາ ປີ 2020

ໂດຍ: ທ່ານ ຣສ ດຣ. ພູທອນ ເມືອງປາກ ຮອງລັດຖະມົນຕີ ກະຊວງສາທາລະນະສຸກ, ຜູ້ປະຈຳການ ຄະນະສະເພາະກິດ

ທ່ານ ສະຫວັນຄອນ ຣາຊະມຸນຕີ ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ, ຫົວໜ້າໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ.

## I. ສະພາບການເຝົ້າລະວັງ COVID-19 ຢູ່ ສປປ ລາວ ຮອດ 5 ໂມງແລງ ຂອງວັນທີ 06 ພຶດສະພາ 2020

### 1. ວຽກງານຈຸດຜ່ານດ່ານ

- ຈຳນວນຜູ້ເດີນທາງເຂົ້າມາ ມີທັງໝົດ **1,806** ຄົນ

- ຈຸດຜ່ານດ່ານລາວ-ໄທ ທັງໝົດ **981** ຄົນ, ໃນນັ້ນ ມີແຮງງານລາວກັບມາຈາກປະເທດໄທ ຜ່ານດ່ານຊ່ອງເມັກ ແຂວງຈຳປາສັກ **28** ຄົນ ແລະ ຜ່ານດ່ານຂົວມິດຕະພາບ II ແຂວງສະຫວັນນະເຂດ ຈຳນວນ **02** ຄົນ, ເຫຼືອນັ້ນ ແມ່ນຜູ້ຂັບລົດຂົນສິ່ງສິນຄ້າ
- ຈຸດຜ່ານດ່ານລາວ-ຈີນ ທັງໝົດ **09** ຄົນ, ທັງໝົດ ແມ່ນຜູ້ຂັບລົດຂົນສິ່ງສິນຄ້າ
- ຈຸດຜ່ານດ່ານລາວ-ຫວຽດ ທັງໝົດ **816** ຄົນ, ທັງໝົດແມ່ນຜູ້ຂັບລົດຂົນສິ່ງສິນຄ້າ
- ຈຳນວນຜູ້ເດີນທາງຜ່ານສະໜາມບິນສາກົນວັດໄຕ **00** ຄົນ

- ໃນທຸກດ່ານ ແມ່ນໄດ້ກວດວັດອຸນຫະພູມຮ່າງກາຍ ແລະ ບໍ່ມີຄົນເປັນໄຂ້
- ສຳລັບແຮງງານລາວ ຈຳນວນ **28** ຄົນ ທີ່ເຂົ້າມາໃໝ່ ຜ່ານດ່ານຊ່ອງເມັກ ແຂວງຈຳປາສັກນັ້ນ ແມ່ນມີຖິ່ນຖານມາຈາກ:
  - ແຂວງຈຳປາສັກ **17** ຄົນ
  - ສະຫວັນນະເຂດ **08** ຄົນ
  - ສາລະວັນ **03** ຄົນ

- ສ່ວນແຮງງານລາວທີ່ເຂົ້າມາຜ່ານດ່ານຂົວມິດຕະພາບ II ຈຳນວນ **02** ຄົນນັ້ນ ທັງໝົດ ແມ່ນມີຖິ່ນຖານມາຈາກ ແຂວງສະຫວັນນະເຂດ.
- ແຮງງານທັງໝົດໄດ້ເກັບຕົວຢ່າງມາກວດ ແລະ ນຳສົ່ງໄປຈຳກັດບໍລິເວນຢູ່ສູນຂອງ ແຂວງ ຈົນຄົບກຳນົດ 14 ວັນ.

## 2. ການເຝົ້າລະວັງ ແລະ ວິເຄາະ

- ໃນວັນທີ 06 ພຶດສະພາ 2020, ໄດ້ເກັບຕົວຢ່າງມາກວດທັງໝົດ **99** ຄົນ, ໃນນັ້ນ ມີ ກໍລະນີສົງໄສ **06** ຄົນ ແລະ ແຮງງານລາວທີ່ກັບມາຈາກປະເທດໄທ **93** ຄົນ.
- ກໍລະນີສົງໄສ **06** ຄົນ ແມ່ນມາຈາກ ນະຄອນຫຼວງວຽງຈັນ **03** ຄົນ, ສະຫວັນນະເຂດ **01** ຄົນ, ໄຊສົມບູນ **01** ຄົນ ແລະ ອຸດົມໄຊ **01** ຄົນ.
- ແຮງງານລາວທີ່ກັບມາຈາກປະເທດໄທ **93** ຄົນ ລາຍລະອຽດດັ່ງລຸ່ມນີ້:
  - ຈຳປາສັກ 35 ຄົນ
  - ສາລະວັນ 26 ຄົນ
  - ຄຳມ່ວນ 14 ຄົນ
  - ສະຫວັນນະເຂດ 11 ຄົນ
  - ໄຊຍະບູລີ 02 ຄົນ
  - ນະຄອນຫຼວງວຽງຈັນ 01 ຄົນ
  - ອຸດົມໄຊ 01 ຄົນ
  - ໄຊສົມບູນ 01 ຄົນ
  - ຫຼວງພະບາງ 01 ຄົນ
  - ວຽງຈັນ 01 ຄົນ
- ຜົນກວດທັງໝົດ **99** ຄົນ ຂອງມື້ວານນີ້ **ບໍ່ພົບເຊື້ອ.**
- **ໝາຍຄວາມວ່າໃນວັນທີ 06 ພຶດສະພາ 2020 ບໍ່ມີຜູ້ຕິດເຊື້ອ.**
- ນັບແຕ່ເດືອນມັງກອນ ຮອດ ວັນທີ 06 ພຶດສະພາ 2020 ໄດ້ເກັບຕົວຢ່າງມາກວດທັງ

ໝົດ ມີ **2,604** ຕົວຢ່າງ, ກວດພົບເຊື້ອສະສົມ **19** ຄົນ (**25 ມື້ແລ້ວທີ່ບໍ່ພົບຜູ້ຕິດເຊື້ອໃໝ່**).

3. **ການຕິດຕາມຜູ້ເດີນທາງມາຈາກຕ່າງປະເທດໂດຍສະເພາະແຮງງານລາວ ຢູ່ສະຖານທີ່ຈຳກັດບໍລິເວນຕ່າງໆຂອງແຂວງ**

- ປະຈຸບັນນີ້ທົ່ວປະເທດ ມີສູນຈຳກັດບໍລິເວນ ທັງໝົດ **77** ສູນ, ມີຜູ້ຈຳກັດບໍລິເວນຢູ່ສູນ **621** ຄົນ, ທັງໝົດນີ້ບໍ່ມີຜູ້ຕິດເຊື້ອ.

4. **ການຕິດຕາມປິ່ນປົວຄົນເຈັບຢູ່ໂຮງໝໍ**

- ປະຈຸບັນ ມີຜູ້ນອນຕິດຕາມຢູ່ໂຮງໝໍມິດຕະພາບ **10** ຄົນ ລວມທັງນໍ້າເບີ 14 ທີ່ເອົາກັບຄືນມານອນຕິດຕາມອາການຢູ່ໂຮງໝໍ, ທັງໝົດເຫັນວ່າມີອາການເບົາບາງ ແລະ ມື້ອື່ນນີ້ກໍ່ຈະເກັບຕົວຢ່າງມາກວດວິເຄາະເພື່ອຢັ້ງຢືນ, ຖ້າບໍ່ພົບເຊື້ອ 2 ຄັ້ງຕິດຕໍ່ກັນ 24 ຊົ່ວໂມງຈະພິຈາລະນາໃຫ້ອອກໂຮງໝໍ ໄປຈຳກັດບໍລິເວນຢູ່ເຮືອນອີກ 14 ວັນ;

5. **ການຕິດຕາມສະພາບການລະບາດຂອງປະເທດໃກ້ຄຽງ ແລະ ການລະບາດຢູ່ໃນໂລກ ເຫັນວ່າ:**

- ມາຮອດເວລາ 6:00 ໂມງເຊົ້າ ຂອງວັນທີ 07 ພຶດສະພາ 2020, ທົ່ວໂລກມີການລາຍງານການລະບາດ ທັງໝົດ 212 (ປະເທດ/ເຂດ)

- ມີການຢັ້ງຢືນ ຜູ້ຕິດເຊື້ອພະຍາດ COVID-19 ແມ່ນ **3,810,785** (86,267 ໃໝ່)
- ເສຍຊີວິດ **264,021** (5,995ໃໝ່) ກວມເອົາ 6.92 % ຂອງຜູ້ຕິດເຊື້ອທັງໝົດ;
- ປິ່ນປົວຫາຍດີ **1,287,656** (49,083 ໃໝ່) ກວມເອົາ 33.7 % ຂອງຜູ້ຕິດເຊື້ອທັງໝົດ;
- ມີບາງປະເທດ ຈຳນວນຜູ້ຕິດເຊື້ອມື້ດຽວ ມີເຖິງ **19,036** ຄົນ ແລະ ເສຍຊີວິດ **1,850** ຄົນຕໍ່ມື້;

- ອັດຕາຄວາມຮ້າຍແຮງຂອງມື້ນີ້ແມ່ນ **6.92 %** (ມື້ວານນີ້ 6.92 %).

- ສະເພາະກຸ່ມປະເທດອາຊຽນກໍ່ເຫັນວ່າ ຍັງມີບາງປະເທດທີ່ມີອັດຕາການຕິດເຊື້ອສູງ ເຖິງ 788 ຄົນ, ໃນວັນທີ 06 ພຶດສະພາ 2020, ຢູ່ກຸ່ມປະເທດອາຊຽນມີການເສຍຊີວິດໃນມື້ວານນີ້ມື້ດຽວ 48 ຄົນ.

## 6. ຂໍ້ແນະນຳ

ບັນດາທ່ານທີ່ນັບຖື ແລະ ຮັກແພງ,

- ສປປ ລາວ ບໍ່ພົບຜູ້ຕິດເຊື້ອໃໝ່ 25 ມື້ແລ້ວ (ເລີ່ມແຕ່ວັນທີ 12 ເມສາ 2020 ເປັນຕົ້ນມາ). ໃນຈຳນວນຜູ້ຕິດເຊື້ອສະສົມ 19 ຄົນ ກໍ່ໄດ້ອອກໂຮງໝໍແລ້ວ 10 ຄົນ ແລະ ຍັງເຫຼືອ 09 ຄົນ ທີ່ຈະໄດ້ສືບຕໍ່ຕິດຕາມ ປິ່ນປົວຕາມອາການຢ່າງໃກ້ຊິດ ໃນນີ້ໄດ້ຮັບຄົນເຈັບເກົ່າເຂົ້າມາຕິດຕາມອາການ 01 ຄົນ, ລວມມີ 10 ຄົນຢູ່ໂຮງໝໍມິດຕະພາບ.
- ໃນໄລຍະຜ່ອນຜັນບາງມາດຕະການ ແຕ່ນີ້ເຖິງ ວັນທີ 17 ພຶດສະພານີ້ ຄະນະສະເພາະກິດພວກເຮົາຈະໄດ້ເອົາໃຈໃສ່ເຝົ້າລະວັງຢ່າງເຂັ້ມງວດຕໍ່ຜູ້ທີ່ຈະເດີນທາງເຂົ້າມາປະເທດເຮົາ ໂດຍການກວດວິເຄາະຫາເຊື້ອພະຍາດທຸກຄົນ ເພື່ອບໍ່ໃຫ້ນຳເຊື້ອເຂົ້າມາປະເທດເຮົາອີກ. ຜູ້ທີ່ມີຜົນກວດວິເຄາະບວກ ກໍ່ຈະໄດ້ເອົາເຂົ້ານອນຕິດຕາມຢູ່ໂຮງໝໍ ເພື່ອບໍ່ໃຫ້ມີຄວາມສ່ຽງທີ່ຈະແຜ່ກະຈາຍເຊື້ອອອກໄປຕິດໃສ່ຜູ້ອື່ນ, ຜູ້ທີ່ມີຜົນກວດວິເຄາະລົບກໍ່ຈະໄດ້ໄປຈຳກັດບໍລິເວນ ຢູ່ ສູນຂອງແຕ່ລະແຂວງຈົນຄົບກຳນົດ 14 ວັນ, ບັນດາພໍ່ແມ່ປະຊາຊົນບັນດາເຜົ່າຈະຕ້ອງໄດ້ເອົາໃຈໃສ່ ເປັນເຈົ້າການປະຕິບັດຕາມແຈ້ງການ ແລະ ຄຳແນະນຳຕ່າງໆຢ່າງເຂັ້ມງວດ ເພື່ອຊ່ວຍສະໜັບສະໜູນມາດຕະການຄວບຄຸມການລະບາດຂອງພະຍາດ COVID-19 ນີ້ ໃຫ້ມີປະສິດທິຜົນ ເພື່ອຈະໄດ້ກຳນົດມາດການຜ່ອນຜັນສືບຕໍ່ໄປອີກຫຼັງຈາກວັນທີ 17 ພຶດສະພາ 2020. ໂດຍສະເພາະການປະຕິບັດມາດຕະການປ້ອງກັນການຕິດເຊື້ອຂອງມວນຊົນເປັນຕົ້ນ ການລ້າງມືດ້ວຍນ້ຳສະອາດ ແລະ ສະບູ ຫຼື ໃຊ້ເຈວລ້າງມື ຂ້າເຊື້ອ 70% ຂຶ້ນໄປ, ການປະຕິບັດໄລຍະຫ່າງ, ການໃສ່ຜ້າປິດປາກ-ດັງ, ເວລາອອກຈາກບ້ານ ຫຼື ຢູ່ສະຖານທີ່ບໍລິການຕ່າງໆ.

- ສະນັ້ນ, ຈຶ່ງຮຽກຮ້ອງໃຫ້ທຸກພາກສ່ວນໃນສັງຄົມ ເອົາໃຈໃສ່ຮ່ວມແຮງຮ່ວມໃຈກັນ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ເຂັ້ມງວດ.ການທີ່ຈະປ້ອງກັນການລະບາດຄືນມາ ຮອບໃໝ່ ຫຼື ຈະເພີ່ມການຜ່ອນຜັນມາດຕະການອື່ນໆ ຫຼັງຈາກວັນທີ 17 ພຶດສະພາ ນີ້ ແມ່ນຂຶ້ນກັບພວກເຮົາໝົດທຸກຄົນ.

- ບັນດາທ່ານໄດ້ຮັບຊາບຂໍ້ມູນຂ່າວສານ ກ່ຽວກັບສະພາບການລະບາດຂອງພະຍາດ COVID-19 ແລະ ການຕິດຕາມປິ່ນປົວຜູ້ຕິດເຊື້ອຢູ່ໂຮງໝໍ
- ຖ້າວ່າບັນດາທ່ານ ຫຼື ຄົນໃນຄອບຄົວຂອງທ່ານ ຫາກມີອາການໄຂ້, ໄອ, ເຈັບຫົວ, ເຈັບທ້ອງ ຫຼື ມີອາການອື່ນໆ ກໍ່ຂໍໃຫ້ບັນດາທ່ານ ເຂົ້າໄປພົບແພດຢູ່ໂຮງໝໍ ເພື່ອຈະໄດ້ ຄັດແຍກ ວ່າມີອາການສົງໃສ ກ່ຽວກັບພະຍາດ COVID-19 ຫຼືບໍ່ ພ້ອມທັງຈະໄດ້ເກັບ ຕົວຢ່າງໄປກວດວິເຄາະຊອກຫາເຊື້ອ ຫຼືວ່າ ບັນດາທ່ານທີ່ມີພະຍາດອື່ນກໍ່ຈະໄດ້ຄັດແຍກ ໄປບ່ອນໜຶ່ງສະເພາະ ເພື່ອທຳການປິ່ນປົວຢ່າງທັນການ.
- ການຖະແຫຼງຂ່າວມາຮອດມື້ນີ້ໄດ້ສິ້ນສຸດລົງ.

**ຂໍຂອບໃຈ ໃນການຕິດຕາມຮັບຊົມ ແລະ ຮັບຟັງ**